**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

********************

ສຳນັກງານປົກຄອງແຂວງຄຳມ່ວນ

ເລກທີ 03 /ຈຂ/ຄມ

ຄຳມ່ວນ, ວັນທີ 21 ມິຖຸນາ 2012

# ຄຳສັ່ງແນະນຳ

## ຂອງ ເຈົ້າແຂວງໆ ຄຳມ່ວນ

## ກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ່ຂອງລວມໝູ່ ແລະ ບຸກຄົນໃນການຈັດຕັ້ງປະຕິບັດຂໍ້ກຳນົດເລກທີ 829/ຄຂປກ, ລົງວັນທີ 15 ມິຖຸນາ 2006 ວ່າດ້ວຍການຂຶ້ນທະບຽນ ແລະ ຄຸ້ມຄອງຍານພາຫະນະຂົນສົ່ງທາງບົກໃນ ສປປ ລາວ

**ເຖິງ: ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ, ກຳລັງປະກອບອາວຸດ, ບັນດາເມືອງ, ບຸກຄົນ ແລະ ນິຕິບຸກຄົນໃນທົ່ວແຂວງ.**

- **ອີງຕາມ:** ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03 /ສພຊ, ລົງວັນທີ 21 ຕຸລາ 2003.
- **ອີງຕາມ:** ຂໍ້ກຳນົດວ່າດ້ວຍການຂຶ້ນທະບຽນ ແລະຄຸ້ມຄອງຍານພາຫະນະຂົນສົ່ງທາງບົກ ໃນ ສປປ ລາວ ສະບັບເລກທີ 829/ຄຂປກ, ລົງວັນທີ 15 ມິຖຸນາ 2006.
- **ອີງຕາມ:** ບົດບັນທຶກກອງປະຊຸມຄະນະປະຈຳພັກແຂວງຄຳມ່ວນ ຄັ້ງວັນທີ 30 ພຶດສະພາ 2012.
- **ອີງຕາມ:** ຄຳເຫັນຊີ້ນຳຂອງການນຳຂັ້ນແຂວງ ຄັ້ງວັນທີ 11/6/2012.

ໃນໄລຍະປີຜ່ານມານອກຈາກ ກົດໝາຍ, ຂໍ້ກຳນົດ ແລະ ນິຕິກຳຕ່າງໆຂອງລັດຖະບານ ກ່ຽວກັບການຄຸ້ມຄອງ, ການຂຶ້ນທະບຽນພາຫະນະປະເພດ ລົດຈັກ, ລົດໃຫຍ່ ( ຂອງພາກລັດ ແລະ ເອກະຊົນ ) ແລ້ວ, ບັນດາຂະແໜງການທີ່ເປັນເສນາທິການກໍ່ໄດ້ມີແຈ້ງການຫລາຍສະບັບ ແລະ ໄດ້ແນະນຳລາຍລະອຽດສົມຄວນ ກ່ຽວກັບການຂຶ້ນທະບຽນພາຫະນະທຸກປະເພດ ໂດຍສະເພາະ ( ການຂຶ້ນທະບຽນລົດປ້າຍສີຟ້າ ).

ເຖິງຢ່າງໃດກໍ່ຕາມ ໄປພ້ອມກັບສະພາບດັ່ງກ່າວ ກໍ່ຍັງເຫັນວ່າບັນດາພະແນກການ, ກົມກອງ, ບຸກຄົນ ແລະ ນິຕິບຸກຄົນ ຍັງສືບຕໍ່ສະເໜີຫາຂະແໜງການກ່ຽວຂ້ອງ ແລະ ການນຳແຂວງຢ່າງຕໍ່ເນື່ອງ ແລະ ຍັງມີລັກສະນະເປັນຂະບວນການໃນການຂໍຂຶ້ນທະບຽນພາຫະນະທີ່ນຳເຂົ້າບໍ່ຖືກຕ້ອງ ເປັນປ້າຍສີຟ້າ ເຊິ່ງບັນດາຂະແໜງການກ່ຽວຂ້ອງກໍ່ຄືການນຳແຂວງ ມີຄວາມເຂົ້າໃຈດີກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຄວາມຈຳເປັນຕໍ່ບັນຫາດັ່ງກ່າວ. ຕໍ່ສະພາບດັ່ງກ່າວນັ້ນ ເຫັນວ່າບັນຫານີ້ກໍ່ແມ່ນບັນຫາໜຶ່ງ ທີ່ພົວພັນເຖິງປະກົດການຫຍໍ້ທໍ້ໃນສັງຄົມ.

ສະນັ້ນ, ເພື່ອເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ກ້າວເຂົ້າສູ່ລະບຽບກົດໝາຍເທື່ອລະກ້າວ, ຫລຸດຜ່ອນປະກົດການຫຍໍ້ທໍ້ໃນສັງຄົມ ແລະ ປະຕິບັດ ຕາມທິດໃນການສ້າງບາດກ້າວ 4 ບຸກທະລຸ ຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກໃຫ້ໄດ້ເທື່ອລະກ້າວ.

ເຈົ້າແຂວງຄໍາມ່ວນມີຄໍາສັ່ງແນະນໍາດັ່ງນີ້:

1. ໃຫ້ບັນດາ ພະແນກການ, ຂະແໜງການ, ກົມກອງ, ກໍາລັງປະກອບອາວຸດ, ໂຮງຮຽນ, ໂຮງໝໍ, ບັນດາເມືອງ ເພີ່ມທະວີການໂຄສະນາສຶກສາອົບຮົມ ໃຫ້ສະມາຊິກພັກ, ພະນັກງານ ແລະ ປະຊາຊົນບັນດາເຜົ່າເຂົ້າໃຈຢ່າງເລິກເຊິ່ງ ທົ່ວເຖິງກ່ຽວກັບການຈັດຕັ້ງປະຕິບັດລະບຽບກົດໝາຍຕ່າງໆ ເວົ້າສະເພາະແມ່ນຂໍ້ກໍານົດ ແລະ ລະບຽບການຕ່າງໆຂອງສູນກາງ ແລະ ຂະແໜງການ ວ່າດ້ວຍການຂຶ້ນທະບຽນພາຫະນະ ( ລົດຈັກ, ລົດໃຫຍ່ ) ເປັນ " ປ້າຍ ສີຟ້າ ".

2. ໃນຂັ້ນຕໍ່ໄປນີ້ ບໍ່ໃຫ້ພະແນກການ, ກົມກອງ, ກໍາລັງປະກອບອາວຸດ, ບັນດາເມືອງ, ບຸກຄົນ ນິຕິບຸກຄົນ, ແນະນໍາ ຫລື ສະເໜີ ຢັ້ງຢືນຫາແຂວງ ແລະ ຫາຂະແໜງການກ່ຽວຂ້ອງ ເພື່ອຂໍໃຫ້ມີນະໂຍບາຍຂຶ້ນທະບຽນປ້າຍສີຟ້າ ລົດທີ່ນໍາເຂົ້າບໍ່ຖືກຕ້ອງ, ຖ້າຫາກວ່າບັນດາພະແນກການ, ຂະແໜງການ, ກົມກອງ, ກໍາລັງປະກອບອາວຸດ, ບັນດາເມືອງ, ບຸກຄົນ, ນິຕິບຸກຄົນ ທີ່ໄດ້ນໍາເຂົ້າພາຫະນະໂດຍບໍ່ຖືກຕ້ອງ ແລ້ວຢາກຂຶ້ນທະບຽນເປັນປ້າຍສີຟ້ານັ້ນ, ແມ່ນໃຫ້ປະຕິບັດຕາມແຈ້ງການເລກທີ 486 /ຫປຂ,ຄມ, ລົງວັນທີ 17 ມິຖຸນາ 2011, ມະຕິກອງປະຊຸມວິສາມັນ ຂອງພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ສະບັບເລກທີ 44/ຄພຖ/ຍທຂ, ລົງວັນທີ 24 ເມສາ 2012 ແລະ ແຈ້ງການເພີ່ມເຕີມ ເລກທີ 1107/ຍທຂ,ຄມ, ລົງວັນທີ 31 ພຶດສະພາ 2012 ທີ່ໄດ້ຈັດສົ່ງໃຫ້ແຕ່ລະພາກສ່ວນແລ້ວ.

3. ພາຍຫລັງໄດ້ຮັບ ຄໍາສັ່ງແນະນໍາສະບັບນີ້ແລ້ວ, ມອບໃຫ້ບັນດາພະແນກການ, ກົມກອງ, ອ້ອມຂ້າງແຂວງ, ບັນດາເມືອງ ເຜີຍແຜ່ເຊື່ອມຊຶມໃຫ້ທົ່ວເຖິງ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ເຈົ້າແຂວງໆຄໍາມ່ວນ

ຄໍາໃບ ດໍາລັສ

ບ່ອນສົ່ງ:
- ຮອງເຈົ້າແຂວງ ທ່ານລະ 1 ສະບັບ ເພື່ອລາຍງານ.
- ຫົວໜ້າພະແນກການ, ກົມກອງອ້ອມຂ້າງແຂວງ ບ່ອນລະ 1 ສະບັບ ( ເພື່ອເຜີຍແຜ່, ແນະນໍາ ແລະ ຈັດຕັ້ງປະຕິບັດ ).
- ບັນດາເມືອງ 10 ສະບັບ ( ເພື່ອເຜີຍແຜ່, ແນະນໍາ ແລະ ຈັດຕັ້ງປະຕິບັດ ).
- ເກັບມ້ຽນ 2 ສະບັບ.